San Diego City Schools
**Fact Sheet** ລະດູໃບໄມ້ລົ່ນ 2005

# ໂຄງການຫລັກສູດສິ່ງແວດລ້ອມສັບປ່ຽນທີ່ກ້າວໜ້າ (PACE)

ໂຄງການຫລັກສູດສິ່ງແວດສັບປ່ຽນທີ່ກ້າວໜ້າ (PACE) ຂອງພະແນກສຶກສາພິເສດເຂດສຶກສາແຊນດິເອໂກແມ່ນໂຄງການສຳຫລັບນັກຮຽນອາຍຸຫ້າເຖິງ 22 ປີທີ່ພິການຂັ້ນພໍປະມານເຖິງຂັ້ນຮ້າຍແຮງ. ໂຄງການ PACE ນີ້ໄດ້ປະຕິບັດຕາມຫລັກສູດທີ່ໃຊ້ການສັບປ່ຽນຂັ້ນມາດຕະຖານ, ເພື່ອຮັບໃບຢັ້ງຢືນການຮຽນຈົບ ແທນທີ່ ຮັບໃບປະກາສນິຍະບັດ (diploma). ໂຄງການນີ້ບໍລິການນັກຮຽນຈຳນວນຫລາຍກວ່າ 500 ຄົນ ທີ່ຕັ້ງຢູ່ໂຮງຮຽນຕ່າງໆໃນເຂດສູນກາງສຶກສາ.

ໂຄງການ PACE ກະກຽມນັກຮຽນ ເພື່ອຢູ່ໃນເຂດຄຸ້ມໂຮງຮຽນກອງເຂົາເຈົ້າໂດຍອີງຕາມຄວາມເຊື່ອຖືຂອງນັກຮຽນແຕ່ລະຄົນ, ໂດຍບໍ່ຈຳແນກຄວາມພິການ, ປະກັນໃຫ້ມີຄວາມເທົ່າທຽມກັນດ້ານເລືອກຮຽນ ແລະ ໃຫ້ການຊ່ວຍເຫລືອນັກຮຽນທຸກໆຄົນໃນກຸ່ມທີ່ມີອາຍຸເທົ່າກັນ.

ຈຸດສຳຄັນເຫລົ່ານີ້ຮວມມີທັງ:

- ໃຫ້ນັກຮຽນທຸກໆຄົນໄດ້ຮັບຜົນປະໂຍດຈາກການສຶກສາທີ່ມີສຸຂພາບດີ
- ນັກຮຽນທຸກໆຄົນໄດ້ຮັບຜົນປະໂຍດຈາກການດຳຣົງຊີວິດຕົວຈິງ, ການຈເຣີນເຕີບໂຕ ແລະ ການຮຽນຮວມກັນ ຜ່ານວິທີດຳເນີນການຮຽນຂັ້ນທັມດາທົ່ວໄປ; ແລະ
- ສັງຄົມຂອງພວກເຮົາຈະມີຄວາມເຂັ້ມແຂງດີຂຶ້ນ ໂດຍການຜ່ານຫລາຍໆເຜົ່າຊົນ.

ຈຸດແນໃສ່ນັກຮຽນ: ພວກນັກຮຽນທີ່ມີເງື່ອນໄຂເຂົ້າໂຄງການ PACE ຕ້ອງແມ່ນຜູ້ເປັນພິການແຕ່ຂັ້ນເບົາບາງ ຂັ້ນໃດຂັ້ນນຶ່ງໃນຄວາມຊັກຊ້າດ້ານມັນສມອງ, ມີຄວາມສລາດ (ໄອຄິວ–IQ 56 ຫາ 80). ກົດພິການຂອງຣັຖບານກາງສຳຫລັບການບໍລິການໃນໂຄງການ PACE ອາດຮວມທັງ, ແຕ່ບໍ່ໄດ້ຈຳກັດເຖິງຄວາມຊັກຊ້າດ້ານມັນສມອງ (MR) ແລະ ພິການຮ້າຍແຮງ (AUT).

ໂຄງການສຶກສາສ່ວນບຸກຄົນ (**IEP**): ນັກຮຽນແຕ່ລະຄົນໃນໂຄງການສຶກສາສ່ວນບຸກຄົນ ແມ່ນເນັ້ນໜັກໃສ່ເປົ້າໝາຍ ແລະ ຈຸດປະສົງສ່ວນບຸກຄົນ ເພື່ອໃຫ້ສາມາດຮຽນຫລັກສູດແກນສານຂອງສູນກາງສຶກສາ ແລະ ໃຫ້ຖືກຕ້ອງກັບຄວາມຕ້ອງການຂອງນັກຮຽນແຕ່ລະຄົນ. ແຜນສຶກສາສ່ວນບຸກຄົນຍັງໄດ້ແຈ້ງເຖິງຄວາມຕ້ອງການຢ່າງນຶ່ງ ຫລື ຫລາຍຢ່າງທີ່ກ່ຽວຂ້ອງກັບການບໍລິການຊ່ອຍເຫລືອ.

## ຂໍ້ສລູບ

- ❖ ບໍລິການພວກນັກຮຽນແຕ່ອາຍຸ 5 ເຖິງ 22 ປີ, ຜູ້ພິການພໍປະມານເຖິງຂັ້ນຮ້າຍແຮງ.
- ❖ ໂຄງການຫລັກສູດສິ່ງແວດສັບປ່ຽນທີ່ກ້າວໜ້າ (PACE) ປະຕິບັດຕາມຫລັກສູດທີ່ໃຊ້ຂັ້ນມາດຖານສັບປ່ຽນ, ຮຽນເອົາໃບຢັ້ງຢືນການຈົບ ແທນທີ່ຈະແມ່ນໃບປະກາດ (diploma).
- ❖ ເປັນຫົນທາງໄປສູ່ສະພາບແວດລ້ອມຂອງການສຶກສາທັມດາທົ່ວໄປ.
- ❖ ເປັນຫົນທາງໄປຫາຫລັກສູດແກ່ນສານ ແລະ ການສິດສອນທີ່ມີທາງເລືອກ, ໂດຍການດັດແປງ ແລະ ນຳມາໃຊ້, ການໃຊ້ເທັກໂນໂລຈີຊ່ອຍ, ແລະ ໃຊ້ວິທີການຕິດຕໍ່ປາກເວົ້າທີ່ເຫມາະສົມຈຳເປັນກັບຄວາມຕ້ອງການແຕ່ລະສ່ວນບຸກຄົນ, ອີງຕາມທິສດີການຄົ້ນຄວ້າປັດຈຸບັນ.
- ❖ ໃຫ້ການສິດສອນ ແລະ ບໍລິການ (ຕົວຢ່າງ PE, SLP, ແລະ OT/PY) ໃຫ້ພວກນັກຮຽນທີ່ມີເງື່ອນໄຂໄດ້ຮັບ, ຕາມເງື່ອນໄຂທີ່ວາງໄວ້ຂອງນັກຊ່ຽວຊານດ້ານນີ້ ແລະ ຕາມຄະນະ IEP.

ການສັບຊ້ອນ: ການສັບຊ້ອນຢູ່ໃນໂຄງການ PACE ແມ່ນສັບຊ້ອນຫລັງຈາກ ຄະນະ IEP ວາງເງື່ອນໄຂແລ້ວ. ໂຄງການ PACE ໃຫ້ການຊ່ວຍເຫລືອກັບໂຮງຮຽນ ແລະ ໂຮງຮຽນໃກ້ຄຽງ, ໂຮງຮຽນທີ່ເລືອກເອົາ ຫລື ບ່ອນອື່ນໆທີ່ຈັດໄວ້ຖືກຕ້ອງເຫມາະສົມນັ້ນ.

ທາງເລືອກເຫລົ່ານີ້ຮວມທັງການສັບຊ້ອນເຂົ້າຫ້ອງຮຽນການສຶກສາທົ່ວໄປ ໃນກຸ່ມພວກນັກຮຽນທີ່ມີອາຍຸເທົ່າກັນ ໃນເວລາຮຽນເຕັມວັນ ຫລື ບໍ່ເຕັມວັນ; ແລະ ຫ້ອງຮຽນເວລາພິເສດສຳຫລັບສິດສອນກຸ່ມນ້ອຍໆ.

## ໂຄງການໃຫ້ການບໍລິການ:

- ໃຫ້ຫົນທາງເພື່ອເຂົ້າຮຽນໃນສິ່ງແວດລ້ອມຂອງການສຶກສາທົ່ວໄປ
- ໃຫ້ຫົນທາງຫລາຍຢ່າງໃນຫລັກສູດແກນສານ ແລະ ການເລືອກຮຽນ, ການຮຽນທີ່ນຳມາໃຊ້ ແລະ ຖືກດັດແປງ, ການໃຊ້ເທັກໂນໂລຈີຊ່ອຍ, ແລະ ການໃຊ້ວິທີຕິດຕໍ່ປາກເວົ້າທີ່ຈຳເປັນເພື່ອໃຫ້ເຫມາະສົມກັບຄວາມຕ້ອງການຂອງສ່ວນບຸກຄົນ, ອີງຕາມທິສດີຂອງການຄົ້ນຄວ້າປັດຈຸບັນ.
- ປະສານງານກັນລະຫວ່າງພະນັກງານການສຶກສາທົ່ວໄປ ແລະ ການສຶກສາພິເສດ.
- ຈັດໃຫ້ມີການສິດສອນ ແລະ ບໍລິການຕ່າງໆ (ເຊັ່ນ APE, SLP, ແລະ OT/OP) ໃຫ້ພວກນັກຮຽນທີ່ມີເງື່ອນໄຂເຫມາະສົມ, ທີ່ໄດ້ກຳນົດໄວ້ ອີງຕາມຂໍ້ທົດສອບໃນເຂດທີ່ຂ້ອງໃຈ ແລະ ຂອງຄະນະ IEP.
- ໃຫ້ການປຶກສາແນະນຳເພື່ອປັບປຸງຍຸທວິທີການສອນ ແລະ ເພື່ອຂຽນແຜນການຊ່ອຍເຫລືອດ້ານການປະພຶດ;
- ຈັດໃຫ້ມີໂຄງການຮຽນເພີ້ມສຳຫລັບພວກນັກຮຽນຖ້າໄດ້ຮັບເງື່ອນໄຂຈາກ ຂອງຄະນະ IEP.
- ປະຕິບັດການສິດສອນ ແລະ ການຮຽນອັນດີເລີດໃນທຸກໆວິຊາການ ອີງຕາມທິສດີ ແລະ ປຣາຊຍາຂອງການຄົ້ນຄວ້າປັດຈຸບັນ.

*ອະພິບັນທະນາການຄ່າພິມຈາກມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: **Progressive Alternative Curriculum Environment (PACE): (858) 693-5500** **www.sandi.net**
**Media inquires: (619) 725-5578** ***revised 10/04/05***

ບໍລິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລີຟເນັຍ, ມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະ ມີພະນັກງານຫລາຍກວາ 14,500 ຄົນ ທີ່ທຽບເທົ່າຕຳແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວາ 15,800 ຄົນ.) ສູນກາງສຶກສາແຊນດິເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ ແລະ ວິຊາເລກໃນຊັ້ນຮຽນກຽມອະນຸບານເຖິງປີທີ 12. ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ.

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.